ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ.....7961.....
ນະຄອນຫຼວງວຽງຈັນ, ວັນທີ: 15 ສິງຫາ 2022

ຮຽນ: - ທ່ານ ຫົວໜ້າ ສານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
- ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງວັນທີ 15 ສິງຫາ 2022.

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 14 ມີນາ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018;

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດຂໍແຈ້ງມະຕິສຳຄັນ ຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 15 ສິງຫາ 2022 ດັ່ງມີລາຍລະອຽດລຸ່ມນີ້:

- ຮັບຮອງການຈ່າຍເງິນປັນຜົນ ຈາກກຳໄລສະສົມຮອດທ້າຍປີ 2021 ດັ່ງລາຍລະອຽດລຸ່ມນີ້ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ:
  - ຈ່າຍເງິນປັນຜົນທັງໝົດ 570,027,606,419 ກີບ
  - ບໍລິສັດຈະຈ່າຍເງິນປັນຜົນຫຼັງຈາກມີມະຕິຈາກກອງປະຊຸມຜູ້ຖືຮຸ້ນ,
  - ການຈ່າຍເງິນປັນຜົນແມ່ນຈະແບ່ງຈ່າຍເປັນຫຼາຍຄັ້ງເນື່ອງຈາກກຳໄລສະສົມເປັນຈຳນວນຫຼາຍ, ສຳລັບ ວັນທີ່ ຈ່າຍເງິນປັນຜົນ ແລະ ວັນປິດປຶ້ມບັນຊີຜູ້ຖືຮຸ້ນເພື່ອຮັບເງິນປັນຜົນໃນແຕ່ລະຄັ້ງແມ່ນ ບໍລິສັດຈະແຈ້ງເປັນລາຍຫຼັງ ອັກສອນຫາຕະຫຼາດຫຼັກຊັບລາວພາຍຫຼັງ ຕາມການອະນຸມັດຂອງສະພາບໍລິຫານ(ມະຕິກອງປະຊຸມຂອງສະພາບໍລິຫານ).
- ຮັບຮອງ ການກະກຽມຈັດກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2022 ດັ່ງນີ້:
  - ກຳນົດເອົາວັນທີ 30 ສິງຫາ 2022 ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະ ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2022.
  - ກຳນົດເອົາວັນທີ 13 ກັນຍາ 2022 ເປັນມື້ຈັດກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ປະຈຳປີ 2022.
  - ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ: ຊັ້ນ 3, ຕຶກ ເອັນເອັນເອັນ, ບ້ານໂພນສີນວນ ເມືອງສີສັດຕະນາກ ນະຄອນຫຼວງ ວຽງຈັນ ເວລາ 01:30 ໂມງ ຕອນແລງ.
  - ກຳນົດວາລະກອງປະຊຸມ ຜູ້ຖືຮຸ້ນດັ່ງນີ້:

    ວາລະທີ 1: ຮັບຮອງການຈ່າຍເງິນປັນຜົນ ຈາກກຳໄລສະສົມຮອດທ້າຍປີ 2021

    ວາລະທີ 2: ບັນຫາອື່ນໆ (ຖ້າມີ)
  - ອະນຸມັດໃຫ້ທ່ານ ໂຢຊິຮິໂຕ ໂອຊິມາ ເປັນຜູ້ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ
ສະພາບໍລິຫານ

ບໍລິສັດ ລາວ ອາ ຊຽນ ເຊົ່າສິນເຊື່ອ ມະຫາຊົນ LAO ASEAN LEASING PUBLIC COMPANY ວຽງຈັນ

ທ່ານ ຊິມໂກ ຢາມາມາກາ